ຂ່າວ

## ປະເທດລາວ ກຽມການຢ່າງເຂັ້ມຂຸ້ນ ໃນການເຈລະຈາ ແຜນງານ FLEGT VPA ຄັ້ງທໍາອິດ ກັບ ສະຫະພາບເອີຣົບ

(ສໍາລັບລົງຂ່າວທັນທີ)

---

**ນະຄອນຫຼວງວຽງຈັນ, 15 ທັນວາ 2016**: ຄະນະຮັບຜິດຊອບດ້ານວິຊາການ ສໍາລັບແຜນງານ FLEGT ສະຫຼຸບບັນດາອົງປະກອບສໍາຄັນຂອງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ໃນວັນທີ 15 ທັນວາ 2016, ເຊິ່ງຈະໄດ້ສະເໜີໃຫ້ແກ່ ສະຫະພາບເອີຣົບ ໃນທ້າຍປີ 2016, ພາຍໃຕ້ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ (FLEGT). ການນໍາສະເໜີ ຮ່າງ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ນີ້ ແມ່ນບາດກ້າວການກະກຽມທີ່ສໍາຄັນສໍາລັບ ການເຈລະຈາຊ່ອງໜ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ສະຫະພາບເອີຣົບ ກ່ຽວກັບ ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA), ເຊິ່ງຈະໄດ້ຈັດຂຶ້ນໃນທ້າຍເດືອນ ກຸມພາ 2017.

ທ່ານ ຄໍາພຸດ ພັນດານຸວົງ, ຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້, ທັງເປັນ ຫົວໜ້າ ຄະນະຮັບຜິດຊອບຊຸກຍູ້ການເຈລະຈາ ໃນແຜນງານ FLEGT, ໄດ້ກ່າວວ່າ "ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ແມ່ນມີຄວາມສໍາຄັນຕໍ່ກັບການປັບປຸງການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ການຄຸ້ມຄອງທີ່ດີ ໃນ ສປປ ລາວ ເນື່ອງຈາກວ່າ ມັນສາມາດຊ່ວຍສ້າງຄວາມເຂົ້າໃຈເພີ່ມເຕີມໃຫ້ແກ່ພະນັກງານລັດ ແລະ ພາກເອກະຊົນ ທີ່ກ່ຽວຂ້ອງ ໃນຂະແໜງປ່າໄມ້ ແລະ ອຸດສາຫະກໍາໄມ້, ໂດຍສະເພາະແມ່ນໃນວຽກງານການຕິດຕາມກວດກາປ່າໄມ້". ທ່ານ ຄໍາພຸດ ຍັງໄດ້ກ່າວຕື່ມວ່າ "ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍຍັງສາມາດຊ່ວຍໃຫ້ພວກເຮົາກໍານົດຊ່ອງວ່າງ ແລະ ແກ້ໄຂ ແລະ ປັບປຸງບັນດາກົດໝາຍ ແລະ ລະບຽບການຕ່າງທີ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ທີ່ບໍ່ສອດຄ່ອງ ຫຼື ສັບສົນ".

ພາຍຫຼັງທີ່ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍໄດ້ຮັບການຮ່າງຂຶ້ນ ໂດຍຜ່ານ ຂະບວນການມີສ່ວນຮ່ວມຂອງຫຼາຍພາກສ່ວນ ແລະ ການປຶກສາຫາລື ກັບ ສະຫະພາບເອີຣົບ ແລ້ວ, ຈະໄດ້ມີການທົດລອງຕົວຈິງໃນພາກສະໜາມ ໂດຍສະເພາະຢູ່ບັນດາ

ແຂວງທົດລອງ. ການທົດລອງຕົວຈິງນີ້ຈະລວມເອົາການປະເມີນເພີ່ມຕື່ມເພື່ອຮັບປະກັນຄວາມເໝາະສົມໃນພາກສະໜາມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມຍັງໄດ້ມີໂອກາດສົນທະນາ ຂອບເຂດຂອງການເຈລະຈາ FLEGT VPA ທາງດ້ານຜະລິດຕະພັນໄມ້, ຕະຫຼາດ ແລະ ແຫຼ່ງທີ່ມາຂອງໄມ້. ຂໍ້ມູນກ່ຽວກັບການຄວບຄຸມຕ່ອງໂສ້ການສະໜອງໄມ້ ແລະ ຂະບວນການກວດກາຍັ້ງຢືນ ແມ່ນໄດ້ຮັບການນຳສະເໜີ ເຊິ່ງມີຄວາມສຳຄັນໃນແຜນງານ FLEGT VPA. ຮ່າງທຳອິດຂອງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍໃນຂອດການປຸງແຕ່ງ ແລະ ການຄ້າໄມ້ ແລະ ເຂດພັດທະນາພື້ນຖານໂຄງລ່າງ ກໍຍັງໄດ້ຮັບການສົນທະນາໃນທີ່ປະຊຸມ.

## ຂໍ້ມູນເພີ່ມເຕີມສຳລັບບັນນາທິການ

ໃນປີ 2003, ສະຫະພາບເອີຣົບ (EU) ໄດ້ຈັດພິມແຜນວຽກການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອສະກັດກັ້ນການຕັດໄມ້ຜິດກົດໝາຍໃນບັນດາປະເທດທີ່ນຳເຂົ້າໄມ້. ອົງປະກອບທີ່ສຳຄັນຂອງແຜນວຽກ FLEGT ແມ່ນລະບົບການເຂົ້າຮ່ວມແບບສະມັກໃຈ ເພື່ອຮັບປະກັນວ່າ ມີພຽງແຕ່ໄມ້ທີ່ຖືກກົດໝາຍເທົ່ານັ້ນ ທີ່ຖືກນຳເຂົ້າຕະຫລາດ EU ຈາກປະເທດທີ່ເຫັນດີທີ່ເຂົ້າຮ່ວມໃນລະບົບນີ້. ໂຄງຮ່າງທາງດ້ານກົດໝາຍພາຍໃນຂອງ EU ສຳລັບລະບົບນີ້ແມ່ນ ລະບຽບກົດໝາຍທີ່ຖືກຮັບຮອງໃນເດືອນ ທັນວາ 2005, ແລະ ລະບຽບກົດໝາຍນຳໃຊ້ປະຕິບັດໃນປີ 2008, ເຊິ່ງສາມາດຄວບຄຸມການນຳເຂົ້າຂອງໄມ້ສູ່ຕະຫຼາດ EU ຈາກປະເທດທີ່ເຂົ້າຮ່ວມການເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (FLEGT VPAs) ກັບ EU.

ອົງປະກອບອັນຕົ້ນຕໍ ຂອງ FLEGT VPA ແມ່ນ ການພັດທະນາ ແລະ ການຈັດຕັ້ງປະຕິບັດຂອງລະບົບການຮັບປະກັນຄວາມຖືກຕ້ອງທາງກົດໝາຍຂອງໄມ້ (TLAS) ເຊິ່ງປະກອບມີ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍແຫ່ງຊາດ, ລະບົບການຄຸ້ມຄອງຕ່ອງໂສ້ການສະໜອງ, ຂັ້ນຕອນການພິສູດໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ຕ່ອງໂສ້ການສະໜອງ, ລະບົບການອອກອະນຸຍາດ FLEGT; ແລະ ການກວດສອບລະບົບທັງໝົດແບບອິດສະຫຼະ.

ໃນກໍລະນີທີ່ເຫັນດີຕົກລົງ, VPAs ຈະລວມເອົາຄວາມຮັບຜິດຊອບ ແລະ ແຜນວຽກຈາກທັງສອງຝ່າຍໃນການຢຸດຕິການຄ້າໄມ້ທີ່ຜິດກົດໝາຍ, ພ້ອມກັບ ລະບົບການອອກອະນຸຍາດເພື່ອພິສູດຄວາມຖືກຕ້ອງຕາມກົດໝາຍຂອງໄມ້ທີ່ສົ່ງອອກໄປ EU. ຂໍ້ຕົກລົງຍັງສົ່ງເສີມການບັງຄັບໃຊ້ກົດໝາຍໄມ້ທີ່ດີຂຶ້ນກວ່າເກົ່າ ແລະ ສົ່ງເສີມວິທີການມີສ່ວນຮ່ວມຂອງປະຊາສັງຄົມ ແລະ ພາກເອກະຊົນ.

ສະຫະພາບເອີຣົບ (EU) ໄດ້ລິເລີ່ມແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອສະກັດກັ້ນການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນທົ່ວໂລກ, ພ້ອມນັ້ນ EU ຍັງໄດ້ກະກຽມການເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ກັບບັນດາປະເທດຜະລິດໄມ້, ເຊິ່ງໄດ້ວາງເຈດຈຳນົງ ແລະ ແນວທາງໃນການຫຼຸດຜ່ອນການຄ້າໄມ້ທີ່ຜິດກົດໝາຍ, ພ້ອມກັບລະບົບການອອກອະນຸຍາດເພື່ອຢັ້ງຢືນຄວາມຖືກຕ້ອງຂອງໄມ້ທີ່ຈະສົ່ງອອກໄປຕະຫຼາດເອີຣົບ. ນິຍາມທີ່ຖືກກົດໝາຍຂອງໄມ້ເປັນອົງປະກອບໜຶ່ງທີ່ສຳຄັນໃນລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້, ເຊິ່ງເປັນສ່ວນໜຶ່ງຂອງຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA).

ສປປ ລາວ ແມ່ນໜຶ່ງໃນບັນດາປະເທດທີ່ເລີ່ມເຈລະຈາຂໍ້ຕົກລົງການເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA), ເຊິ່ງເປັນຂໍ້ຕົກລົງການຄ້າກັບສະຫະພາບເອີຣົບ, ທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ *ການສະໜັບສະໜູນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ* (ProFLEGT) ພາຍໃຕ້ການຮ່ວມມືດ້ານການພັດທະນາຂອງ ເຢຍລະມັນ, ເຊິ່ງຈັດຕັ້ງປະຕິບັດໂດຍ GIZ (Deutsche Gesellschaft fuer Internationale Zusammenarbeit).

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

ProFLEGT ແມ່ນໂຄງການລິເລີ່ມຮ່ວມຂອງລັດຖະບານແຫ່ງ ສປປ ລາວ ແລະ ການຮ່ວມມືການພັດທະນາຂອງປະເທດເຢຍລະມັນ, ເຊິ່ງເປັນໂຄງການທີ່ເຮັດວຽກຮ່ວມກັບ ກະຊວງ ກະສິກຳ ແລະ ປ່າໄມ້ (ໂດຍຜ່ານ ຫ້ອງການປະສານງານ FLEGT ພາຍໃຕ້ການຄຸ້ມຄອງຂອງ ກົມກວດກາປ່າໄມ້, DOFI), ກະຊວງ ອຸດສາຫະກຳ ແລະ ການຄ້າ, ແລະ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລວມທັງ ໜ່ວຍງານພາກລັດ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນການສຶກສາ ແລະ ອຸດສາຫະກຳປຸງແຕ່ງໄມ້.

ໃນໄລຍະທຳອິດຂອງແຜນງານ FLEGT-VPA ນີ້ແມ່ນໄດ້ຈັດຕັ້ງຂຶ້ນຢູ່ 3 ແຂວງທົດລອງ ຄື: ແຂວງ ໄຊຍະບູລີ, ຄຳມ່ວນ ແລະ ອັດຕະປື. ໃນນັ້ນ ອົງການ WWF ຈັດຕັ້ງປະຕິບັດແຜນງານ FLEGT ຮ່ວມກັບ ກົມກວດກາປ່າໄມ້ ໃນ ສອງ ແຂວງ ພາກໃຕ້ (ແຂວງ ຄຳມ່ວນ ແລະ ແຂວງ ອັດຕະປື). ອົງການ WWF ໄດ້ຈັດຕັ້ງປະຕິບັດວຽກງານໂດຍການຊອກຫາແນວທາງແກ້ໄຂ, ການມີສ່ວນຮ່ວມຂອງຫຼາຍພາກສ່ວນ ນຳໃຊ້ຮູບແບບທີ່ເໝາະສົມຂອງທ້ອງຖິ່ນ ແລະ ສາກົນ ທີ່ມີການຮ່ວມມືກັນຂອງພາກສ່ວນທີ່ກ່ຽວຂ້ອງ ເພື່ອຫຼຸດຜ່ອນການຕັດໄມ້ທຳລາຍປ່າ ແລະ ການເຊື່ອມໂຊມຂອງປ່າໄມ້.

*ຂໍ້ມູນເພີ່ມເຕີມກ່ຽວກັບ ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ: http://flegtlaos.com/*

*ຂໍ້ມູນເພີ່ມເຕີມກ່ຽວກັບ ແຜນວຽກ EU-FLEGT: http://www.flegt.org/*

*ຂໍ້ມູນເພີ່ມເຕີມກ່ຽວກັບ ສະເພາະນັກຂ່າວ ໃນການລາຍງານຜົນການສະກັດກັ້ນການຕັດໄມ້ທີ່ຜິດກົດໝາຍ ໂດຍຜ່ານ ແຜນວຽກ EU-FLEGT: http://www.flegtmedia.org/*

*ຂໍ້ມູນເພີ່ມເຕີມກ່ຽວກັບ ນະໂຍບາຍປ່າໄມ້ອາຊຽນສາມາດເຂົ້າເບິ່ງໄດ້ທີ່:*
*http://www.asean.org/*

*ຂໍ້ມູນເພີ່ມເຕີມກ່ຽວກັບ ແນວຄວາມຄິດລິເລີ່ມ ກ່ຽວກັບ ການຈັດຕັ້ງປະຕິບັດກົດຫມາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສາມາດເຂົ້າເບິ່ງໄດ້ທີ່:*
*http://ec.europa.eu/development/policies/9interventionareas/environment/forest/forestry_intro_en.cfm*

*www.euflegt.efi.int*

*ຂໍ້ມູນເພີ່ມເຕີມກ່ຽວກັບ ຄວາມເຂົ້າໃຈຕໍ່ກັບ ການເຄື່ອນຍ້າຍ ແລະ ການຄວບຄຸມໄມ້ ໃນ ສ.ປ.ປ. ລາວ ສາມາດເຂົ້າເບິ່ງໄດ້ທີ່:*
*http://www.euflegt.efi.int/publications/-/document/25520*

***ຂໍ້ມູນເພີ່ມເຕີມກ່ຽວກັບ ກົດລະບຽບການນໍາເຂົ້າໄມ້ເຂົ້າສູ່ສະຫະພາບເອີຣົບ***

*http://www.cbi.eu/market-information/timber-products/eutr-guide*

***ຂໍ້ມູນເພີ່ມເຕີມກ່ຽວກັບ FLEGT*, ເຊີນຕິດຕໍ່:**

ທ່ານ ຄໍາພອນ ບຸນທະວີ, FLEGT Standing Office, ມືຖື: +856-20-9621 1288, khambtv@gmail.com